ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 1 ສະບັບທີ 2 (ເດືອນ ທັນວາ 2025)
ໜ້າ 38 – 49
Lao Journal of Sustainable Teacher Education SALAVAN Teacher Training College, Volume 1 No 2 (December, 2025) Page 38 – 49

ບົດຄວາມວິໄຈ
(Research Article)

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ໂຄງເລື່ອງຂອງນິທານພື້ນເມືອງລາວ

# The Structure of Lao Folk Tales

ຄຳພຸຍ ພົນລືຊາ[1], ອຸເທ ສີບຸນເຮືອງ[2], ແລະ ພິດສະພົງ ວົງພະຈັນ[3]
Khamphuy PHOLLUXA, Outhay SEEBOUNHEUANG & Phitsaphong VONGPHACHANH

## ບົດຄັດຫຍໍ້

ການສຶກສາໂຄງເລື່ອງຂອງນິທານພື້ນເມືອງລາວ ແມ່ນການວິເຄາະສ່ວນປະກອບຊື່ເລື່ອງ ແລະ ວິເຄາະສ່ວນປະກອບຂອງເນື້ອເລື່ອງຂອງນິທານພື້ນເມືອງລາວ 34 ເລື່ອງ. ຮູບແບບການສຶກສາແມ່ນສຶກສາແບບຄຸນນະພາບ ໂດຍອີງໃສ່ແນວຄິດທິດສະດີໂຄງປະກອບສ້າງບົດວັນນະຄະດີ. ຜົນການຄົ້ນຄວ້າມີດັ່ງນີ້:

ການວິເຄາະສ່ວນປະກອບຊື່ເລື່ອງຂອງນິທານພື້ນເມືອງລາວຄັ້ງນີ້ ພົບວ່າ ນິທານພື້ນເມືອງລາວ 34 ເລື່ອງ ມີສ່ວນປະກອບຊື່ເລື່ອງທີ່ສຳຄັນ 3 ພາກສ່ວນ ຄື ພາກສ່ວນຊື່ເລື່ອງຕາມສິ່ງວິເສດ, ພາກສ່ວນຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ, ພາກສ່ວນຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ.

ການວິເຄາະສ່ວນປະກອບຂອງເນື້ອເລື່ອງຂອງນິທານພື້ນເມືອງລາວຄັ້ງນີ້ ພົບວ່າ ນິທານພື້ນເມືອງລາວທັງ 34 ເລື່ອງມີສ່ວນປະກອບເນື້ອເລື່ອງທີ່ສຳຄັນ 3 ພາກສ່ວນ ຄື ພາກສ່ວນເປີດເລື່ອງ, ພາກສ່ວນເດີນເລື່ອງ ແລະ ພາກສ່ວນສະຫຼຸບເລື່ອງ.

ລວມຄວາມແລ້ວການສຶກສາໂຄງເລື່ອງຂອງນິທານພື້ນເມືອງລາວຜ່ານສ່ວນປະກອບຊື່ເລື່ອງ ແລະ ສ່ວນປະກອບເນື້ອເລື່ອງຂອງນິທານ 34 ເລື່ອງ ພົບ ພາກສ່ວນໂຄງເລື່ອງຂອງນິທານພື້ນເມືອງລາວ 6 ພາກສ່ວນ. ບັນດາພາກສ່ວນດັ່ງກ່າວມີການພົວພັນກັນຢ່າງສະໜິດແໜ້ນ ບໍ່ສາມາດຕັດແຍກອອກຈາກກັນໄດ້.

**ຄຳສັບສຳຄັນ:** ໂຄງເລື່ອງ, ນິທານ, ພື້ນເມືອງລາວ

[1] ພາກວິຊາ ພາສາ-ວັດທະນະທຳລາວ. ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ/ ສປປ ລາວ.
[2] ພາກວິຊາ ພາສາ-ວັດທະນະທຳລາວ. ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ/ ສປປ ລາວ.
[3] ພາກວິຊາ ພາສາ-ວັດທະນະທຳລາວ. ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ/ ສປປ ລາວ.
Corresponding Author: Khamphuy PHOLLUXA, Email: khamphuy.Plx@gmail.com, Tel: 02028280269

## Abstract

The research structure of Lao folk tales is an analysis of the title components and the content components of 34 Lao folk tales. The study method is a qualitative study based on the theory of literary structure. The results of the research are as follows:

The analysis of the title components of Lao folk tales found that 34 Lao folk tales have 3 important title components: component based on the supernatural, component based on the specific characteristics of the characters, and component based on the specific names of the characters.

The analysis of the plot components of Lao folk tales found that 34 Lao folk tales there are 3 important plot components: the beginning part, the content part, and the conclusion part. In total, The research structure of Lao folk tales through the title components and content components 34 tales found 6 plot components in Lao folk tales. These parts are closely related and cannot be separated from each other.

**Keywords: Lao folklore, structure, tale.**

## ບົດນຳ

ນິທານແມ່ນຜະລິດຕະພັນທາງສັງຄົມໃນອະດີດທີ່ໄດ້ຮັບການຖ່າຍທອດສືບຕໍ່ກັນມາຫຼາຍຮຸ່ນຄົນ. ນິທານພື້ນເມືອງລາວເປັນສິ່ງຢັ້ງຢືນເຖິງວິວັດທະນາການ ແລະ ວິຖີຊີວິດຂອງຊົນຊາດລາວທີ່ມີມາຍາວນານ ຕັ້ງແຕ່ຍຸກຫີນຈົນເຖິງປັດຈຸບັນ (ບຸນມີ ເທບສີເມືອງ, 2000). ຢ່າງໃດກໍຕາມ, ເຖິງວ່າຈະມີຄວາມສຳຄັນໃນຖານະມໍລະດົກທາງວັດທະນະທຳ, ແຕ່ການຮຽນການສອນນິທານພື້ນເມືອງໃນລະດັບມະຫາວິທະຍາໄລຍັງບໍ່ທັນໄດ້ຮັບການປັບປຸງໃຫ້ແທດເໝາະກັບສະພາບການປ່ຽນແປງຂອງສັງຄົມ. ບັນຫາຫຼັກທີ່ພົບຄືການຂາດແຄນເອກະສານວິເຄາະວິຈານຕາມແນວຄິດທິດສະດີທີ່ທັນສະໄໝ ເຮັດໃຫ້ນັກສຶກສາທີ່ຮຽນຈົບໄປບໍ່ສາມາດຄົ້ນຄວ້າ ຫຼື ນຳເອົາບົດນິທານເກົ່າມາປະຍຸກໃຊ້ເຂົ້າໃນຊີວິດຕົວຈິງໄດ້ຢ່າງມີປະສິດທິພາບ.

ການວິເຄາະໂຄງສ້າງຂອງນິທານຕ້ອງອາໄສຄວາມເຂົ້າໃຈກ່ຽວກັບວັດທະນະທຳ ແລະ ວິຖີຊີວິດຂອງຄົນໃນສັງຄົມທີ່ນິທານນັ້ນເກີດຂຶ້ນ (Thompson, 1977). ໂຄງສ້າງທາງໄວຍາກອນຂອງນິທານບໍ່ພຽງແຕ່ໃຫ້ຄວາມບັນເທີງ ແຕ່ຍັງສະທ້ອນໃຫ້ເຫັນລະບົບຄິດ ແລະ ປັດຊະຍາຊີວິດທີ່ຝັງເລິກຢູ່ໃນສັງຄົມ. ການນຳໃຊ້ທິດສະດີໂຄງປະກອບສ້າງບົດວັນນະຄະດີມາເປັນເຄື່ອງມືໃນການວິເຄາະ ຈະຊ່ວຍໃຫ້ຜູ້ຮຽນເຂົ້າໃຈເນື້ອເລື່ອງໄດ້ງ່າຍຂຶ້ນ ແລະເປັນພື້ນຖານສຳຄັນໃນການວິເຄາະວິຈານວັນນະຄະດີໃນຂັ້ນສູງຕໍ່ໄປ.

ນິທານພື້ນເມືອງຂອງແຕ່ລະທ້ອງຖິ່ນເປັນສິ່ງຢັ້ງຢືນເຖິງຄວາມເປັນມາຍາວນານຂອງສັງຄົມນັ້ນໆ (ລາວັນ ສັງຂະພັນທານົນ, 2011). ຜ່ານມາ, ພັກ ແລະ ລັດຖະບານລາວໄດ້ມີແນວທາງໃນການປົກປັກຮັກສາ ແລະ ພັດທະນາວັນນະຄະດີພື້ນເມືອງ. ເຖິງຢ່າງໃດກໍຕາມ, ການວິເຄາະທີ່ຜ່ານມາມັກຈະເນັ້ນໜັກແຕ່ແນວຄິດຊົນຊັ້ນ ເຮັດໃຫ້ຄຸນຄ່າທາງດ້ານວັດທະນະທຳ ແລະ ສັງຄົມທີ່ອຸດົມສົມບູນຂອງນິທານລາວຖືກຕີລາຄາໃນຂອບເຂດທີ່ແຄບລົງ. ດັ່ງນັ້ນ, ການສຶກສາໂຄງເລື່ອງທີ່ມີລັກສະນະວິທະຍາສາດຈຶ່ງເປັນສິ່ງຈຳເປັນເພື່ອເປີດມຸມມອງໃໝ່ໃນການສຶກສາວັນນະຄະດີ.

ຈາກສະພາບບັນຫາທີ່ກ່າວມາ, ທີມງານຄົ້ນຄວ້າຈຶ່ງມີຄວາມສົນໃຈສຶກສາ "ໂຄງເລື່ອງຂອງນິທານພື້ນເມືອງລາວ" ໂດຍການວິເຄາະສ່ວນປະກອບຊື່ເລື່ອງ ແລະ ເນື້ອເລື່ອງຂອງນິທານ 34 ເລື່ອງ. ການວິໄຈຄັ້ງນີ້ມີຈຸດປະສົງເພື່ອຫາຄຳຕອບວ່າ ໂຄງເລື່ອງຂອງນິທານລາວປະກອບມີຈັກພາກສ່ວນ ແລະ ມີລັກສະນະຄືແນວໃດ. ຜົນການສຶກສານີ້ຄາດວ່າຈະເປັນອຸທາຫອນ ແລະ ເປັນເຄື່ອງມືສຳຄັນໃຫ້ແກ່ນັກສຶກສາ ແລະ ຄູອາຈານໃນການສອນວິເຄາະວັນນະຄະດີພື້ນເມືອງລາວໃຫ້ມີຄວາມເລິກເຊິ່ງ ແລະ ສອດຄ່ອງກັບບໍລິບົດຂອງຊາດຍິ່ງຂຶ້ນ.

## ຈຸດປະສົງການຄົ້ນຄວ້າວິໄຈ

1. ເພື່ອວິເຄາະພາກສ່ວນໂຄງເລື່ອງຂອງນິທານພື້ນເມືອງລາວ
2. ເພື່ອວິເຄາະພາກສ່ວນເນື້ອເລື່ອງຂອງນິທານພື້ນເມືອງລາວ

## ວິທີດຳເນີນການຄົ້ນຄວ້າວິໄຈ

ການສຶກສາຄັ້ງນີ້ເປັນການວິໄຈແບບຄຸນນະພາບໂດຍຜ່ານຂໍ້ມູນເອກະສານ ດັ່ງນັ້ນ ການສຶກສາຈຶ່ງເປັນການລວບລວມນິທານຈາກຫໍສະໝຸດ, ຮ້ານຂາຍປຶ້ມ ແລະ ນັກຄົ້ນຄວ້າທີ່ຮຽບຮຽງ ແລະ ຈັດກ່າຍນິທານ ຊຶ່ງມີລາຍລະອຽດ ດັ່ງນີ້:

**ວິທີເລືອກນິທານ:** ທີມງານຄົ້ນຄວ້າລວບລວມຊື່ນິທານຕ່າງໆ ຕາມປຶ້ມຕຳລາຮຽນວິຊາພື້ນເມືອງລາວ, ປຶ້ມໂຄງການໃບລານລາວ, ແລະ ລາຍຊື່ປຶ້ມນິທານຕາມຫໍສະໝຸດ 5 ແຫ່ງເຊັ່ນ ຫໍສະໝຸດແຫ່ງຊາດ,ຫໍ ສະໝຸດນະຄອນຫຼວງ, ຫໍສະໝຸດສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ຫໍສະມຸດກາງ ມຊ, ຫໍສະໝຸດພາກວິຊາພາສາ-ວັດທະນະທຳລາວ ແລະ ຮ້ານຂາຍປຶ້ມແຫ່ງລັດ ສາມາດລວບລວມລາຍຊື່ນິທານ ພື້ນເມືອງໄດ້ 120 ເລື່ອງ ແລ້ວ ເລືອກເອົາ 40 ເລື່ອງມາຄົ້ນຄວ້າ ແລະ ນຳສະເໜີ 34 ເລື່ອງ.

**ວິທີເລືອກຂໍ້ມູນ**: ເພື່ອເຮັດໃຫ້ຂໍ້ມູນມີຄວາມໜ້າເຊື່ອ ຈຶ່ງໄດ້ວາງເກນການຄັດເລືອກ ບົດນິທານ 34 ເລື່ອງເປັນຖານຂໍ້ມູນໃນການວິເຄາະຄື 1) ນິທານຕ້ອງເປັນເລື່ອງໄດ້ພິມເປັນປຶ້ມເຜີຍແຜ່ໂດຍກົມວັນນຄະດີ, ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ແລະ ຫໍສະມຸດແຫ່ງຊາດ, ຫໍສະໝຸດກາງ ມຊ ເປັນຜູ້ຈັດພິມອອກ ແລະ 2) ນິທານຕ້ອງເປັນເລື່ອງໃນບົດໂຄງການຄົ້ນຄວ້ານິທານຂອງມະຫາວິທະຍາໄລແຫ່ງຊາດ. 3) ນິທານຕ້ອງເປັນເລື່ອງທີ່ມີເນື້ອເລື່ອງແຕ່ຕົ້ນຈົນຈົບເລື່ອງ ແລະ 4) ບົດເລື່ອງຕ້ອງແມ່ນນິທານພື້ນເມືອງ.

**ເຄື່ອງມືທີ່ໃຊ້ໃນການລົງເກັບກຳຂໍ້ມູນ:** ການສຶກສາຄັ້ງນີ້ແມ່ນການຄົ້ນຄວ້າແບບຄຸນນະພາບ ເຄື່ອງມືໃຊ້ໃນການລົງເກັບກຳຂໍ້ມູນແມ່ນຄຳຖາມປາຍເປີດ 2 ແບບຄື ແບບ 1 ແມ່ນຄຳຖາມສຳພາດຜູ້ ຮຽບຮຽງນິທານ ແລະ ຜູ້ໃຫ້ຖານຂໍ້ມູນ(ນິທານ) ຈຳນວນ 10 ຄຳຖາມ ເພື່ອລວມລວມຖານຂໍ້ມູນທີ່ເປັນນິທານ 40 ເລື່ອງ; ແບບທີ່ 2 ແມ່ນຄຳຖາມເຈາະຈົ້ມ ຈຳນວນ 280 ຄຳຖາມ ເພື່ອ ຊ່ວຍໃຫ້ຜູ້ເກັບກຳຂໍ້ມູນໄດ້ສັງເກດ ແລະ ຈົດບັນທຶກຂໍ້ມູນຈາກເອກະສານ ຊຶ່ງເປັນນິທານພື້ນເມືອງລາວ ຈຳນວນ 40 ເລື່ອງ. ໜ່ວຍວິເຄາະແມ່ນຊື່ເລື່ອງ 34 ເລື່ອງ ແລະ ຂໍ້ຄວາມຂອງເນື້ອເລື່ອງໃນນິທານ 34 ຂໍ້ຄວາມ.

**ວິທີວິເຄາະຂໍ້ມູນ:** ການສຶກສາໄດ້ຈຳແນກ ແລະ ຈັດໝວດໝູ່ຂອງຂໍ້ມູນຕາມຈຸດປະສົງ ແລະ ຂອບເຂດດ້ານເນື້ອໃນ ຂອງການຄົ້ນຄວ້າ. ການວິເຄາະພາກສ່ວນເນື້ອເລື່ອງຂອງນິທານ 34 ເລື່ອງ ໄດ້ວິເຄາະຕາມແນວຄິດທິດສະດີ ໂຄງປະກອບສ້າງບົດວັນນະຄະດີ 5 ພາກສະເໜີ, ພາກຂອດບັນຫາ, ພາກຂະຫຍາຍ, ພາກຈຸດສູງສຸດ ແລະ ພາກມ້ວນທ້າຍ (ສິ້ນສຸດ) ເປັນແນວທາງໃນການວິເຄາະ. ສ່ວນການວິເຄາະພາກສ່ວນຊື່ເລື່ອງ ຂອງນິທານ 34 ເລື່ອງ ແມ່ນນຳເອົາຊື່ເລືອງ ແລະ ປະຫັວດຫຍໍ້ຂອງນິນ 34 ເລື່ອງມາວິເຄາະ. ການວິເຄາະຂໍ້ມູນໄດ້ໃຊ້ການອະທິບາຍ, ພິສູດ, ການປຽບທຽບ ແລະ ອ້າງຫຼັກຖານ.

## ຜົນການຄົ້ນຄວ້າວິໄຈ ແລະ ອະພິປາຍຜົນການຄົ້ນຄວ້າວິໄຈ

### ຜົນການຄົ້ນຄວ້າວິໄຈ

ການສຶກສາໂຄງເລື່ອງຂອງນິທານພື້ນເມືອງ 34 ເລື່ອງຄັ້ງນີ້ ພົບວ່າ  ນິທານ 34 ເລື່ອງມີສ່ວນປະກອບສຳຄັນ 2 ພາກສ່ວນຄື ພາກສ່ວນຊື່ເລື່ອງ ແລະ ພາກສ່ວນເນື້ອເລື່ອງ.

**1) ສ່ວນປະກອບຊື່ເລື່ອງຂອງນິທານ**

ສ່ວນປະກອບຊື່ເລື່ອງແມ່ນພາກສ່ວນໜຶ່ງ ທີ່ສຳຄັນຂອງໂຄງເລື່ອງ ເພາະເປັນພາກສ່ວນທຳອິດຂອງເລື່ອງ ຊ່ວຍສື່ສານເນື້ອໃນຂອງເລື່ອງໃຫ້ຜູ້ອ່ານຮູ້ສຶກສົນໃຈ. ດັ່ງນັ້ນ ການສຶກສາໂຄງເລື່ອງຈຶ່ງມີຄວາມຈຳເປັນສຶກສາພາກສ່ວນຊື່ເລື່ອງ ເຊິ່ງການສຶກສາໄດ້ນຳເອົາຊື່ເລື່ອງຂອງນິທານ 34 ເລື່ອງ ມາວິເຄາະຜ່ານປະຫວັດຫຍໍ້ຂອງເລື່ອງທຸກເລື່ອງ ແລ້ວສະຫຼູບພາກສ່ວນຊື່ເລື່ອງຂອງນິທານ ຊຶ່ງຈະຍົກຕົວຢ່າງການວິເຄາະ 2 ເລື່ອງດັ່ງນີ້;

**ເລື່ອງຫຍໍ້ນິທານ "ກຳພ້າເຕົ່າຄຳ"**: ມີແມ່ເຖົ້າຜູ້ໜຶ່ງທຸກຈົນທີ່ສຸດ ບໍ່ມີເງິນຄຳມູນມັງກໍຈັກຢ່າງ, ມີຜົວ, ຜົວກໍຕາຍປະ ແລະ ລູກກໍບໍ່ມີ ແມ່ເຖົ້າຢາກກິນເຂົ້າແຮງ ຈຶ່ງຈັບຫວິງໄປສ້ອນ! ລາວທັງສ້ອນ ທັງໄຫ້ຈົ່ມທຸກຈົ່ມຍາກ ແລະ ໄຫ້ຈົ່ມຫາຜົວ ແມ່ເຖົ້າໄປສ້ອນແຕ່ເຊົ້າຮອດແລງ ສ້ອນຈົນອິດຈົນເມື່ອຍ ກໍມີແຕ່ເຕົ່ານ້ອຍໂຕດຽວ ມາເຂົ້າຫວິງ ຕັ້ງຫຼາຍເທື່ອ. ເມື່ອຄໍ່າ, ແມ່ເຖົ້າໄດ້ເອົາເຕົ່ານ້ອຍມາລ້ຽງເປັນລູກເປັນຫຼານ ຊື່ວ່າທ້າວເຕົ່າຄຳ.

ຕັ້ງແຕ່ນັ້ນມາ, ແມ່ເຖົ້າກໍບໍ່ໄດ້ອຶດເຂົ້າຢາກປາ ແລະ ມີຄວາມສຸກນຳທ້າວເຕົ່າຄຳເປັນຢ່າງຍິ່ງ. ແມ່ເຖົ້າຢາກໄດ້ເມຍໃຫ້ທ້າວເຕົ່າ ແຕ່ບໍ່ມີປັນຍາ; ເຕົ່າຄຳບອກວ່າຈະຫາເມຍມາລ້ຽງແມ່ເຖົ້າ. ທ້າວເຕົ່າຄຳຮູ້ເປົ່າແຄນມ່ວນ, ຊາວບ້ານ ແລະ ນາງຫຼ້າລູກສາວພະຍາມັກສຽງແຄນຂອງລາວ ແລະ ທ້າວກຳພ້າກໍມັກນາງຫຼ້າລູກສາວພະຍາຈຶ່ງໃຫ້ແມ່ເຖົ້າມາຂໍແຕ່ພະຍາຮ້າຍດ່າແມ່ເຖົ້າ. ທ້າວເຕົ່າຄຳບອກແມ່ເຖົ້າເປ່ໝາກແຕງໄປຂໍລູກສາວພະຍາອີກ; ໝາກແຕງເກີດເປັນເປັນຄຳ. ພະຍາເຫັນໝາກແຕງ ກາຍເປັນເງິນຄຳ ກໍໄດ້ຈັດງານແຕ່ງດອງໃຫ້ແກ່ນາງຫຼ້າ ແລະ ທ້າວເຕົ່າຄຳ.

ຫຼັງຈາກແຕ່ງງານແລ້ວ, ອອງເຕົ່າໄດ້ກາຍເປັນພະລາຊະວັງທີ່ສວຍງາມ ແລະ ເຕົ່າຄຳກໍກາຍເປັນຊາຍງາມໄດ້ທັງກາງເວັນ ແລະ ກາງຄືນ ນັບແຕ່ນັ້ນມາ, ແມ່ເຖົ້າທີ່ທຸກຈົນ  ແລະ ງຽບເຫງົາກໍກາຍເປັນຄົນທີ່ອົບອຸ່ນ ແລະ ມີຄວາມຮັ່ງມີ, ມີເຮືອນງາມປານພະລາຊະວັງ.

ຜ່ານເລື່ອງຫຍໍ້ນີ້ສະແດງໃຫ້ເຫັນວ່າ ນິທານເລື່ອງນີ້ມີຊື່ເລື່ອງວ່າ "ກຳພ້າເຕົ່າຄຳ" ຊື່ນີ້ໄດ້ມາຈາກຕົວລະຄອນເອກ ແລະ ຕົວລະຄອນໃຈກາງຂອງເລື່ອງຄື ແມ່ເຖົ້າເປັນຕົວລະຄອນເອກ ແລະ ເຕົ່າຄຳເປັນຕົວລະຄອນໃຈກາງທັງເປັນສິ່ງວິເສດ.

**ເລື່ອງຫຍໍ້ນິທານເລື່ອງ "ກຳພ້າໝອນກໍ່ວ":** ກຳພ້າໝອນກໍ່ວ ເປັນຊື່ເອີ້ນຂອງຊາຍທຸກຈົນຄົນໜຶ່ງລາວເປັນຄົນຂີ້ຄ້ານ ເມື່ອພໍ່ແມ່ຕາຍປະລາວກໍບໍ່ເຮັດຫຍັງ ມີແຕ່ນອນກັບນອນຈົນໝອນກໍ່ວ ຈົນໄດ້ຊື່ ກຳພ້າໝອນກໍ່ວ.

ເສດຖີຄົນໜຶ່ງມີໃຈເມດຕາໃຫ້ທານຫຼາຍ ເມື່ອຕາຍແລ້ວເກີດເປັນກຳພ້າໝອນກໍ່ວ. ກຳພ້າເປັນຄົນຂີ້ຄ້ານມີແຕ່ນອນກັບນອນ ບໍ່ສົນໃຈນຳວຽກບ້ານການເມືອງເອົາແຕ່ນອນເປັນໃຫຍ່ ເວລາຖືກຜຽນໄປເຮັດທາງ, ກຳພ້າໝອນກໍ່ວກໍອູ້ມໝອນໄປນອນຢູ່ແຄມທາງ ຕົ້ນຫຍ້າປົ່ງຖົມຕົນໂຕ ກໍຍັງນອນຫຼັບສະບາຍ. ກຳພ້າໝອນກໍ່ວນອນຢູ່ແຄມທາງໄດ້ມີເຫງັ້ນມາຢຽບປາກ, ລາວຈັບຂາເຫງັ້ນໄດ້ ວ່າຈະຂ້າອົບກິນ ແຕ່ແລ້ວກຳພ້າໄດ້ໂຜດເຫງັ້ນ ແລະເຫງັ້ນໄດ້ຂັບລຳກ່ອມກຳພ້ານອນຕາມສັນຍາ. ກຳພ້າໝອນກໍ່ວໄດ້ເຈ່ຍເຫງັ້ນຂ້າມນ້ຳ; ເຫງັ້ນເກີດມີຄວາມເຊື່ອຖືຮັກແພງ ແລ້ວຂານອາສາຊ່ວຍເຫຼືອອ້າຍໝອນກໍ່ວ ຍ້ອນຫຼາຍຄົນເອົາເງິນຄຳມາຈ້າງຟັງເຫງັ້ນຂັບ ເຮັດໃຫ້ກຳພ້າໝອນກໍ່ວໄດ້ກາຍເປັນຄົນຮັ່ງຄົນມີເປັນເສດຖີ.

ເມື່ອຄິດຄວາມດີຂອງສ່ຽວ, ກຳພ້າໝອນກໍ່ວກໍຕົກລົງມອບເຫງັ້ນໂຕນັ້ນໃຫ້ສ່ຽວຢືມ ສ່ຽວອ້າຍໝອນກໍ່ວໄດ້ບັງຂັບເຫງັ້ນລອຍຂ້າມນ້ຳ, ເຫງັ້ນຢ້ານນ້ຳຈົນໂຕສັ່ນທົດໆ ຈຶ່ງຄິດຄຽດຢູ່ໃນໃຈ ສ່ຽວກຳພ້າອອກຄຳສັ່ງໃຫ້ເຫງັ້ນຂັບແມ໋! ຂັບແມ໋! ເຫງັ້ນກໍບໍ່ຍອມຂັບ ເພາະວ່າເຫງັ້ນຍັງຢ້ານຂ້າມນ້ຳຢູ່ບໍ່ແລ້ວບໍ່ລືມ! ສ່ຽວຂອງກຳພ້າໄດ້ເສຍການພະນັນ ຈຶ່ງໄດ້ມອບເຫງັ້ນໃຫ້ແກ່ຊາວບ້ານຕາມທີ່ໄດ້ຕົກລົງກັນໄວ້!. ກຳພ້າໝອນກໍ່ວຮູ້ຈຶ່ງເອົາດູກເຫງັ້ນເຮັດເບັດໄປຕຶກໄດ້ເງິນຄຳ ສ່ຽວກຳພ້າຢືມເບັດໄປຕຶກໄດ້ແຕ່ຂີ້ກະເດືອນ ລາວຈຶ່ງຫັກເບັດຖິ້ມ!. ກຳພ້າໝອນກໍ່ວເອົາດູກເຫງັ້ນມາເຮັດຫວີ ຫວີບາດໃດກໍມີເງິນຄຳຫຼົ່ນລົງມາ ສ່ຽວກຳພ້າຢືມໄປຫວີຈົນຜົມຫຼົ່ນໝົດຫົວ ກໍບໍ່ເຫັນເງິນຄຳ ລາວທັບຫວີຈົນມຸ່ນ!. ກຳພ້າໝອນກໍ່ວໄດ້ເກັບເອົາຫວີມຸ່ນມາຝັງໄວ້ປາຍຊານ ກໍເກີດເປັນຕົ້ນໄມ້ປ່ອງເມື່ອໃບລົງຊານກຳພ້າກາຍເປັນເງິນຄຳ ແຕ່ຕົກລົງຊານສ່ຽວພັດເປັນໃບໄມ້ທຳມະດາ ເພິ່ນຈຶ່ງເອີ້ນຊື່ວ່າ "ໄມ້ດວງ".

ຜ່ານເລື່ອງຫຍໍ້ສະແດງໃຫ້ເຫັນວ່າ ນິທານເລື່ອງນີ້ມີຊື່ເລື່ອງວ່າ"ກຳພ້າໝອນກໍ່ວ" ຊື່ນີ້ໄດ້ມາຈາກຕົວລະຄອນເອກ ແລະ ລັກສະນະສະເພາະຂອງຕົວລະຄອນເອກໃນເລື່ອງຄື ກຳພ້າເປັນຄົນຂີ້ຄ້ານມີແຕ່ນອນກັບນອນ ຈົນໝອນກໍ່ວ.

ສະຫຼຸບໄດ້ວ່າ ການສຶກສາຊື່ເລື່ອງຂອງນິທານ 34 ເລື່ອງ ພົບພາກສ່ວນຊື່ເລື່ອງຂອງນິທານ 3 ພາກສ່ວນ ຄືພາກສ່ວນຊື່ເລື່ອງຕາມສິ່ງວິເສດ, ຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ ແລະ ຕັ້ງຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ. ພາກສ່ວນຊື່ເລື່ອງຕາມສິ່ງວິເສດມີ 15 ເລື່ອງ ເຊັ່ນ ເຕົ່າຄຳ, ຜີກ່ອງກ້ອຍ, ເຫງັ້ນລຳ, ຫູໝໍ້ຂາງ, ນົກອິນຊີ, ເປັດດ່ອນຫົວຂຽວ, ໝາກຂີ້ກາ, ຄ້ອງທິບ, ໝາກເຂືອ, ໝາກຄໍ້, ສາລີ, ຜີນ້ອຍ, ເຕັນດ່ອນ, ປີ່ຂຸ່ຍ, ຫອຍປັງ. ຕັ້ງຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ ມີ 17 ເລື່ອງ ເຊັ່ນ ຕ້ອງຕ່ຽວ, ຫຼຸດຫົດແສນເປົາ, ໝາກສ້ານ, ນົກຕໍ່, ໝາກນາວ, ໜ້າບົ້ງ, ເປັຍຄ່ອມ, ເກົ້າການ, ໝອນກໍ່ວ, ຂີ້ໄດ້ຕິດຫຼາຍ, ສອງອ້າຍນ້ອງ, ກ່ຳກາດຳ, ຜະຫຍາດີ, ລືມບໍ່ຄິດ, ເງິນເຕັມພາຜະຫຍາເຕັມປູມ, ເຈັດໄຫ ແລະ ຈັນທະພານິດ. ຕັ້ງຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ ມີ 2 ເລື່ອງ ເຊັ່ນ ດາວເຮືອງ ແລະ ຈັນທະຄາດ.

**2) ສ່ວນປະກອບເນື້ອເລື່ອງຂອງນິທານ**

ການສຶກສາສ່ວນປະກອບເນື້ອເລື່ອງຂອງນິທານພື້ນເມືອງລາວ ພົບວ່າ ນິທານມີເນື້ອໃນເປັນລະບົບເກາະກ່າຍກັນ. ການວິເຄາະສ່ວນສ່ວນປະກອບເນື້ອເລື່ອງຂອງນິທານພື້ນເມືອງ 34 ເລື່ອງຕາມ 5 ພາກສ່ວນຂອງໂຄງເລື່ອງ ຄືພາກສະເໜີ, ພາກຂອດບັນຫາ, ພາກຂະຫຍາຍ, ພາກຈຸດສູງສຸດ ແລະ ພາກມ້ອນທ້າຍ.  ການສຶກສາສ່ວນປະກອບ

ເນື້ອເລື່ອງມີຄວາມຈຳເປັນສຶກສາພາກສ່ວນເນື້ອເລື່ອງ ເຊິ່ງການສຶກສາໄດ້ນຳເອົາເນື້ອເລື່ອງຂອງນິທານ 34 ເລື່ອງ ມາວິເຄາະເນື້ອເລື່ອງ ແລ້ວ ສະຫຼູບພາກສ່ວນເນື້ອເລື່ອງຂອງນິທານ ຊຶ່ງຈະຍົກຕົວຢ່າງການວິເຄາະ 2 ເລື່ອງດັ່ງນີ້;

**ໂຄງເລື່ອງນິທານ "ກຳພ້າກ່ຳກາດຳ":** ເລື່ອງກ່ຳກາດຳ ເປັນນິທານພື້ນເມືອງລາວເລື່ອງໜຶ່ງທີ່ໄດ້ຮັບການນິ ຍົມເລົ່າສືບກັນມາໃນໝູ່ປະຊາຊົນລາວ ແລະ ໄດ້ມາຈັດພິມຫຼາຍຄັ້ງມາແລ້ວ ເປັນຕົ້ນແມ່ນສະບັບຄຳເວົ້າທຳມະດາຂອງ ທອງເຊີຍ ອຸທຸມພອນ (2011). ສຳລັບນິທານເລື່ອງກຳພ້າກ່ຳກາດຳທີ່ນຳມາສຶກສາໂຄງສ້າງນິທານພື້ນເມືອງລາວຄັ້ງນີ້ໄດ້ມາຈາກປຶ້ມ "ກຳພ້າກ່ຳກາດຳ" ທອງເຊີຍ ອຸທຸມພອນ ສຳນັກພິມແສງສຸວັນ ໂຮງພິມດວງມາການພິມ, ວຽງຈັນ, ຫໍສະໝຸດແຫ່ງຊາດ (2021). ນິທານດັ່ງກ່າວ ມີໂຄງເລື່ອງດັ່ງນີ້:

**ພາກສະເໜີ:** ຜົວເມຍໜຶ່ງແຕ່ງດອງມາໄດ້ຫຼາຍປີ ແຕ່ບໍ່ມີລູກ ຈຶ່ງໄປຂໍລູກນຳພະອິນ. ພະອິນສັ່ງໃຫ້ທ້າວເທບອິນທະ ກັບນາງຈູນລະນີ ລົງມາເກີດພ້ອມກັນ ແຕ່ຖືກລົມຫຼວງ ພັດໄປຄົນລະບ່ອນ. ນາງຫຼ້າປະສູດລູກອອກມາ, ຕົວດຳປີ້ບໍ່ ຄືຄົນ ຈົນພີ່ນ້ອງຢ້ານພາກັນໜີກັບເຮືອນທັງໝົດ ຍັງເຫຼືອແຕ່ຜົວເມຍເຝົ້າລູກ!

**ຂອດບັນຫາ:** ນາງຫຼ້າສີທຽນເຕັມກາໜຶ່ງ ໃສ່ຊ້ານ້ອຍພາຍໄປຫາໝໍທວາຍ, ໝໍໂໜເຖົ້າ! ນາງຮີບຟ້າວໄປບອກຜົວວ່າ ລູກເຮົາເປັນຄົນຂອງແທ້ ຄັນວ່າລ້ຽງໄວ້ຈິຕາຍໝົດຝູງພີ່ນ້ອງ. ເມື່ອນັ້ນ ແມ່ກໍຈັບແຂນທ້າວລາກແກ່ລົງເຮືອນໄປໄຫຼນ້ຳ ພໍ່ກໍເຊຊອນແລ່ນຕາມຫຼັງໄປ! ແມ່ຟ້າວຈັດວາງແພລົງນ້ຳ; ຜົວກໍຈັບຈ່ອງແພໄວ້ບໍ່ວາງ ແລ້ວເອົາໄມ້ຄ້ອນຕີຫົວເມຍ ເມຍຮ້ອງໄຫ້ຕີດ່າຜົວ; ຜົວຂືນເມຍບໍ່ໄດ້ກໍເລີຍວາງແພປະປ່ອຍໄຫຼນ້ຳໄປ!

**ພາກຂະຫຍາຍ:** ພະຍາອິນຫຼຽວລົງເມືອງຄົນໄດ້ເຫັນ ທ້າວກາຄົ້ມມິ້ມໄຫຼນ້ຳໄປຄ້າງຢູ່ຫາດຊາຍ ຈຶ່ງບອກທ້າວກາດຳຮີບໄປຊ່ວຍນ້ອງ. ທ້າວກ່ຳກາດຳໄດ້ຍ່າງຊັດເຊພະເນຈອນໄປຕາມດົງດອນປ່າໄມ້ໃນເມືອງເປັງຈານ ຈຶ່ງໄປພົບສວນຫຼວງ ແລ້ວອາໄສຢູ່ສວນຫຼວງແຫ່ງນັ້ນ. ກ່ຳກາດຳຖືກແຮ້ວຍ່າຈຳສວນ; ຍ່າມາເຫັນຄິດວ່າແມ່ຊະນີຄັນວ່າແມ່ນສັດຊ້ຳພັດຍັງ ຄືຄົນ! ທ້າວກ່ຳກາດຳບອກຍ່າວ່າ ດອກໄມ້ເຈົ້າຮ້ອຍໃຫ້ຖວາຍອິງພີ່ເອື້ອຍ, ສ່ວນດອກໄມ້ຫຼານຮ້ອຍໃຫ້ຖວາຍເຈົ້ານາງລຸນ ເດີຍ່າເດີ! ນາງລູນເຫັນຮອດດອງໄມ້ແລ້ວໃຈ ຢູ່ບໍ່ເປັນສຸກ ຍາມໃດກໍນັ່ງແຍງຮອດດອກໄມ້ແລ້ວຄິດຫາເຈົ້າຂອງຜູ້ຮ້ອຍດອກໄມ້. ກ່ຳກາດຳຄິດຫານາງລູນ ຈຶ່ງລັກໄປຫານາງຢູ່ຜາສາດ. ນາງລູນເຫັນ ແລ້ວຢ້ານຈົນສະຫຼົບ ທ້າວໂຈມເອົານາງໄປໃນຫ້ອງຫໍປາຜາສາດ ແລ້ວເອົາມ່ານກັ້ງບັງໄວ້! ທ້າວກ່ຳກາດຳຄິດຢາກໄດ້ນາງລູນມາເປັນເມຍ ຈຶ່ງບອກໃຫ້ຍ່າຈຳສວນລອງໄປໂອມຂໍນາງລູນນຳພະຍາເບິ່ງ. ນາງລູນກໍຊູລູເຂົ້າມາພິທີ ໄດ້ມາເຫັນຮູບທ້າວກ່ຳກາດຳເປັນຄົນຂີ້ຮ້າຍ ນາງກໍຕົກສະເງີ້ ຄັນຊິກັບ ຄືນໄປກະຢ້ານຂາຍຂີ້ໜ້າພໍ່.

**ຈຸດສູງສຸດ:** ຜົວເມຍໜຶ່ງແຕ່ງດອງມາໄດ້ຫຼາຍປີ ແຕ່ບໍ່ມີລູກ ຈຶ່ງໄປຂໍລູກນຳພະອິນ. ພະອິນສັ່ງໃຫ້ທ້າວເທບອິນທະ ກັບນາງຈູນລະນີ ລົງມາເກີດພ້ອມກັນ ແຕ່ຖືກລົມຫຼວງ ພັດໄປຄົນລະບ່ອນ. ນາງຫຼ້າປະສູດລູກອອກມາ, ຕົວດຳປີ້ບໍ່ ຄືຄົນ ຈົນພີ່ນ້ອງຢ້ານພາກັນໜີກັບເຮືອນທັງໝົດ ຍັງເຫຼືອແຕ່ຜົວເມຍເຝົ້າລູກ!

**ພາກມ້ວນທ້າຍ:** ກ່ຳກາດຳໄດ້ເປັນພະຍາແລ້ວກໍໄດ້ໄປນຳຍ່າຈຳສວນມາຢູ່ນຳຢ່າງມີຄວາມສຸກ ແລະ ແຕ່ງເສນາໄປຊອກນຳຫາພໍ່ ເສນາອາມາດ ແລະ ນາຍສະເພົາໄດ້ພົບ ພໍ່ພະຍາກ່ຳກາດຳ ແລ້ວພາພໍ່ໄປຫາລູກຊາຍທີ່ເມືອງອິນທາພະຍາກ່ຳກາດຳໄດ້ແລ່ນໄປກອດພໍ່, ພໍ່ຍັງງຶງຢູ່ແຕ່ກໍຄິດວ່າຕ້ອງແມ່ນລູກຕົນເອງທັງສອງຈຶ່ງກອດກັນຮ້ອງໄຫ້ນ້ຳຕາຍ້ອຍ ເຟືອດຟາຍ ແລ້ວກໍພາພໍ່ເມືອໂຮງຫຼວງ ພໍ່ລູກໄດ້ພົບກັນ, ກ່ຳກາດຳໄດ້ເລົ່າເລື່ອງໃຫ້ພໍ່ຟັງ ແລ້ວພໍ່ກໍຄອບໃຈທຸກໆຄົນທີ່ໄດ້ຊ່ວຍເຫຼືອລູກໃຫ້ພົ້ນທຸກ ແລະ ຂໍໃຫ້ລູກເປັນສຸກປະການ. ທ້າວກ່ຳກາດຳໄດ້ຕົກແຕ່ງແປງກາຍໃຫ້ພໍ່

ສວຍງາມ, ແລ້ວນຸ່ງເຄື່ອງຂຸນເມືອງ ເພື່ອເຂົ້າພາຂວັນລູກຊາຍເຮັດຮັບຕອນພໍ່, ແຕ່ນັ້ນມາຍ່າ ແລະ ພໍ່ສຸກຢູ່ສ້າງບຸນ ທ້າວເຫຼື້ອມງ່ຳທ່ານເອີຍ!

**ໂຄງເລື່ອງນິທານ “ກຳພ້າເຕົ່າຄຳ”**: ນິທານເລື່ອງກຳພ້າເຕົ່າຄຳເປັນນິທານພື້ນເມືອງ ທີ່ໄດ້ຮັບການເລົ່າສູ່ກັນຟັງ ໃນຫຼາຍທ້ອງຖິ່ນ ແລະ ໄດ້ຮັບການຈານລົງໃນໃບລານ ແລະ ໄດ້ປະລິວັດຈັດພິມເຜີຍແຜ່ໂດຍຫໍສະໝຸດແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າສິລະປະວັດທະນະທຳແຫ່ງຊາດ. ສຳລັບນິທານເລື່ອງກຳພ້າເຕົ່າຄຳທີ່ນຳມາສຶກສາໂຄງສ້າງນິທານພື້ນເມືອງລາວຄັ້ງນີ້ໄດ້ມາຈາກປຶ້ມ “ນິທານກຳພ້າເຜົ່າລາວ” ຊຶ່ງຄົ້ນຄວ້າຮຽບຮຽງໂດຍ ຄຳຜຸຍ ພົນລືຊາ ແລະ ຄະນະ (2021). ນິທານດັ່ງກ່າວ ມີໂຄງເລື່ອງດັ່ງນີ້:

**ພາກສະເໜີ:** ແມ່ເຖົ້າຜູ້ໜຶ່ງທຸກຈົນທີ່ສຸດ ບໍ່ມີເງິນຄຳມູນມັງ ຈັກຢ່າງ, ຜົວຕາຍປະ ແລະ ລູກກໍບໍ່ມີ.

**ພາກຂອດບັນຫາ:** ແມ່ເຖົ້າຈັບຫວິງໄປສ້ອນ! ລາວທັງສ້ອນ ທັງໄຫ້ຈົ່ມທຸກຈົ່ມຍາກ ແລະ ໄຫ້ຈົ່ມຫາຜົວ ແມ່ເຖົ້າໄປສ້ອນແຕ່ເຊົ້າຮອດແລງ ສ້ອນຈົນອິດຈົນເມື່ອຍ ກໍມີແຕ່ເຕົ່ານ້ອຍໂຕດຽວ ມາເຂົ້າຫວິງ ຕັ້ງຫຼາຍເທື່ອ. ເມື່ອຄ່ຳ, ແມ່ເຖົ້າໄດ້ເອົາເຕົ່ານ້ອຍມາລ້ຽງເປັນລູກເປັນຫຼານ ຊື່ວ່າທ້າວເຕົ່າຄຳ.

**ພາກຂະຫຍາຍ: ຄື**ນມື້ໜຶ່ງ ເຕົ່າຄຳໄດ້ກັບເພດເປັນຊາຍຮູບງາມ ພ້ອມດ້ວຍແຄນດວງໜຶ່ງ. ແຕ່ລະມື້ທ້າວເຕົ່າຄຳຈະອອກຈາກອອງມາເປົ່າແຄນສູ່ແມ່ຕູ້ຟັງ. ຊາວບ້ານ ແລະ ນາງຫຼ້າລູກສາວພະຍາໄດ້ຍິນກໍເກີດມັກສຽງແຄນຂອງທ້າວ. ນາງຫຼ້າຈຶ່ງຫຼອຍມາພົບ ແລະ ທັງສອງກໍເກີດຄວາມຮັກມັກກັນ ແລ້ວທ້າວໄດ້ອ້ອນວອນໃຫ້ແມ່ເຖົ້າໄປຂໍນາງຫຼ້າເປັນເມຍ.

**ພາກຈຸດສູງສຸດ:** ແມ່ເຖົ້າອິດຕໍ່ການອ້ອນວອນຂອງຫຼານບໍ່ໄດ້ຈຶ່ງຈັບເອົາພ້າຄົມຫ້ຽນໄປຂໍລູກສາວພະຍາ. ພະຍາຮ້າຍດ່າແມ່ເຖົ້າ ທຸກຈົນເຂົ້າຊິກິນເຮືອນຊິຢູ່ກໍບໍ່ມີ, ເຫດໃດຈຶ່ງກ້າມາຂໍລູກພະຍາມະຫາກະສັດພ້ອມທັງໃຫ້ເສນາອາມາດໄລ່ແມ່ເຖົ້າອອກຈາກວັງ ທັງແກວ່ງພ້າຄົມຫ້ຽນໃສ່ແມ່ເຖົ້າ ແຕ່ຕົກໃສ່ພື້ນເຮືອນລຸລົງຕະລ່າງ. ຫຼາຍເດືອນຜ່ານໄປ ທ້າວເຕົ່າຄຳໄດ້ອ້ອນວອນໃຫ້ແມ່ເຖົ້າເປົ້ໝາກແຕງໄປຂໍລູກສາວພະຍາອີກ ແຕ່ກໍຖືກໄລ່ຈົນເຮັດໃຫ້ໝາກແຕງຕົກຊະຊາຍແລ້ວກາຍເປັນເງິນເປັນຄຳ. ເມື່ອເຫັນເຫດການດັ່ງກ່າວ ພະຍາຈຶ່ງຄຶດ ຄືນເຫດການ ເປັນຫຍັງພ້າຄົມຫ້ຽນຕົກລົງພື້ນເຮືອນຈຶ່ງເປັນປ່ອງ ແລະ ໝາກແຕງຈຶ່ງກາຍເປັນຄຳໄດ້.

**ພາກມ້ວນທ້າຍ:** ຈາກນັ້ນ ພະຍາກໍໃຫ້ເສນາອາມາດໄປຈອບເບິ່ງເຮືອນແມ່ເຖົ້າຈຶ່ງຮູ້ວ່າຫຼານແມ່ເຖົ້າເປັນເຕົ່າຄຳ ແລ້ວກັບເມືອເລົ່າໃຫ້ພະຍາຟັງ. ພະຍາຈຶ່ງເອີ້ນນາງຫຼ້າມາຖາມວ່າ ຈະເອົາເຕົ່າຄຳເປັນຜົວໄດ້ບໍ ນາງຫຼ້າກໍບໍ່ຂັດຂ້ອງ. ຫຼັງຈາກເປັນຜົວເມຍກັນແລ້ວ, ອອງເຕົ່າໄດ້ກາຍເປັນພະລາຊະວັງທີ່ສວຍງາມ ແລະ ທ້າວເຕົ່າຄຳກໍກາຍເປັນຊາຍຮູບງາມ. ແມ່ເຖົ້າທີ່ທຸກຈົນປ່ຽວພອຍກໍກາຍເປັນຄົນທີ່ມີຄອບຄົວຮັ່ງມີ ແລະ ມີຄວາມສຸກ.

ຜ່ານການວິເຄາະພາກສ່ວນເນື້ອເລື່ອງຂອງນິທານຂ້າງເທິງນັ້ນ ເຫັນວ່ານິທານທຸກໆເລື່ອງ ລ້ວນແຕ່ໄດ້ດຳເນີນໄປຕາມ 5 ພາກສ່ວນ ຄື ພາກສະເໜີ, ພາກຂອດບັນຫາ, ພາກຂະຫຍາຍ, ພາກຈຸດສູງສຸດ ແລະ ພາກມ້ວນທ້າຍ. ເມື່ອວິເຄາະລາຍລະອຽດ 5 ພາກສ່ວນຂອງໂຄງເລື່ອງ ພົບວ່າ ເນື້ອເລື່ອງຂອງນິທານພື້ນເມືອງລາວມີພຽງ 3 ພາກສ່ວນ ຄື ພາກສ່ວນເປີດເລື່ອງ, ພາກສ່ວນເດີນເລື່ອງ ແລະ ພາກສ່ວນມ້ວນທ້າຍເລື່ອງ. ພາກສ່ວນເປີດເລື່ອງແມ່ນການເລີ່ມຕົ້ນເລື່ອງດ້ວຍການກ່າວເຖິງສະພາບຕ່າງໆຂອງຕົວລະຄອນ; ພາກສ່ວນເດີນເລື່ອງ ເປັນພາກສ່ວນສະແດງການເຄື່ອນໄຫວຂອງຕົວລະຄອນ ຊຶ່ງສ່ວນຂອດບັນຫາ, ສ່ວນຂະຫຍາຍ, ສ່ວນຈຸດສູງສຸດ; ພາກສ່ວນມ້ວນທ້າຍເລື່ອງ ແມ່ນການສະຫຼຸບເລື່ອງຊຶ່ງເປັນຈຸດສິ້ນສຸດການເຄື່ອນໄຫວຂອງຕົວລະຄອນ.

**ອະພິປາຍຜົນການຄົ້ນຄວ້າວິໄຈ**

ການສຶກສາໂຄງເລື່ອງຄັ້ງນີ້ໄດ້ມີຈຸດປະສົງຄົ້ນຄວ້າ 2 ບັນຫາຫຼັກ ຄື ວິເຄາະສ່ວນປະກອບຊື່ເລື່ອງຂອງນິ ທານພື້ນເມືອງ ແລະ ສ່ວນປະກອບເນື້ອເລື່ອງຂອງນິທານ 34 ເລື່ອງ. ດັ່ງນັ້ນ, ການຄົ້ນຄວ້າຈຶ່ງໄດ້ໃຊ້ ແນວຄິດທິດສະດີໂຄງປະກອບສ້າງບົດວັນນະຄະດີຂອງ ຄຳສອນ ທອງມີໄຊ ແລະ ກົງຈັນພະເມືອງ (2020); ແນວຄິດທິດສະດີນີ້ສາມາດວິເຄາະສ່ວນປະກອບຂອງໂຄງເລື່ອງໄດ້ ແຕ່ບໍ່ສາມາດວິເຄາະພາກສ່ວນຊື່ເລື່ອງທີ່ເປັນພາກສ່ວນ ສຳຄັນໜຶ່ງຂອງໂຄງເລື່ອງໄດ້. ດັ່ງນັ້ນການສຶກສາຈຶ່ງໄດ້ ອີງໃສ່ແນວຄິດທິດສະດີນັກຂຽນນິທານພື້ນເມືອງລາວທີ່ສະແດງອອກໃນຊື່ເລື່ອງຂອງນິທານ 34 ເລື່ອງ. ການຄົ້ນຄວ້າໂຄງເລື່ອງນິທານພື້ນ ເມືອງລາວ ສາມາດສະຫຼຸບການຄົ້ນຄວ້າໂຄງເລື່ອງຂອງນິທານພື້ນເມືອງລາວເປັນບົດຄົ້ນຄວ້າທີ່ມີລັກສະນະແຕກຕ່າງຈາກບົດຄົ້ນຄວ້າທີ່ຜ່ານມາ ເພາະການຄົ້ນຄວ້າໄດ້ຄົ້ນພົບແນວຄິດໃໝ່ 2 ແນວຄິດຄື:

**ແນວຄິດ1:** ແນວຄິດພາກສ່ວນຊື່ເລື່ອງຂອງນິທານພື້ນເມືອງລາວ. ນິທານພື້ນເມືອງລາວມີໂຄງເລື່ອງ 3 ພາກສ່ວນຄື 1) ພາກສ່ວນຊື່ເລື່ອງຕາມສິ່ງວິເສດ, ພາກສ່ວນຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ, ພາກສ່ວນຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ.

**ແນວຄິດ2:** ແນວຄິດພາກສ່ວນເນື້ອເລື່ອງຂອງນິທານພື້ນເມືອງລາວ. ນິທານພື້ນເມືອງລາວມີໂຄງເລື່ອງ 3 ພາກສ່ວນຄື ພາກເປີດເລື່ອງ, ພາກສ່ວນເດີນເລືອງ ແລະ ພາກສ່ວນມ້ວນທ້າຍເລືອງ.

**ສະຫຼຸບຜົນ**

ການວິເຄາະສ່ວນປະກອບໂຄງເລື່ອງຂອງນິທານພື້ນເມືອງລາວ 34 ເລື່ອງເຫັນວ່າ ນິທານພື້ນເມືອງລາວມີສ່ວນປະກອບໂຄງເລື່ອງທີສຳຄັນ 2 ພາກສ່ວນ ຄື ພາກສ່ວນຊື່ເລື່ອງ ແລະ ພາກສ່ວນເນື້ອເລື່ອງ. ການສຶກສາພາກສ່ວນຊື່ເລື່ອງ ແລະ ພາກສ່ວນເນື້ອເລື່ອງຂອງນິທານພື້ນເມືອງລາວໄດ້ມີຜົນການສຶກສາດັ່ງນີ້:

ການພາກສ່ວນຊື່ເລື່ອງຂອງນິທານ 34 ເລື່ອງ ພົບວ່າ ພາກສ່ວນຊື່ເລື່ອງຂອງນິທານພື້ນເມືອງລາວປະກອບມີ 3 ພາກສ່ວນ ຄື ພາກສ່ວນຊື່ເລື່ອງຕາມສິ່ງວິເສດ, ພາກສ່ວນຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ ແລະ ພາກສ່ວນຕັ້ງຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ. ພາກສ່ວນຊື່ເລື່ອງຕາມສິ່ງວິເສດມີ 15 ເລື່ອງ ເຊັ່ນ ເຕົ່າຄຳ, ຜີກ່ອງກ້ອຍ, ເຫງັນລຳ, ຫູໝໍ້ຂາງ, ນົກອິນຊີ, ເປັດດ່ອນຫົວຂຽວ, ໝາກຂີ້ກາ, ຄ້ອງທິບ, ໝາກເຂືອ, ໝາກຄໍ້, ສາລີ, ຜີນ້ອຍ, ເຕັນດ່ອນ, ປີ່ຂຸ່ຍ, ຫອຍປັງ. ຕັ້ງຊື່ເລື່ອງຕາມລັກສະນະສະເພາະຂອງຕົວລະຄອນ ມີ 17 ເລື່ອງ ເຊັ່ນ ຕ້ອງຕ່ຽວ, ຫຼຸດຫົດແສນເປົ່າ, ໝາກສ້ານ, ນົກຕໍ່, ໝາກນາວ, ໜ້າເບົ້ງ, ເປັຍຄ່ອມ, ເກົ້າການ, ໝອນກໍ່ວ, ຂີ້ໄດ້ຕິດຫຼາຍ, ສອງອ້າຍນ້ອງ, ກໍ່າກາດຳ, ຜະຫຍາດີ, ສົມບໍ່ຄິດ, ເງິນເຕັມພາຜະຫຍາເຕັມປູມ, ເຈັດໄຫ ແລະ ຈັນທະພານິດ. ຕັ້ງຊື່ເລື່ອງຕາມຊື່ສະເພາະຂອງຕົວລະຄອນ ມີ 2 ເລື່ອງ ເຊັ່ນ ດາວເຮືອງ ແລະ ຈັນທະຄາດ.

ການວິເຄາະພາກສ່ວນເນື້ອເລື່ອງຂອງນິທານ 34 ເລື່ອງ ພົບວ່າ ນິທານພື້ນເມືອງລາວທຸກໆເລື່ອງ ລ້ວນແຕ່ປະກອບມີເນື້ອເລື່ອງ 3 ພາກສ່ວນ ຄື ພາກສ່ວນເປີດເລື່ອງ, ພາກສ່ວນເດີນເລື່ອງ ແລະ ພາກສ່ວນມ້ວນທ້າຍເລື່ອງ. ພາກສ່ວນເປີດເລື່ອງແມ່ນການເລີ່ມຕົ້ນເລື່ອງດ້ວຍການກ່າວເຖິງສະພາບຕ່າງໆຂອງຕົວລະຄອນ; ພາກສ່ວນເດີນເລື່ອງ ແມ່ນສ່ວນຂອດບັນຫາ, ສ່ວນຂະຫຍາຍ, ສ່ວນຈຸດສູງສຸດ ຊຶ່ງເປັນພາກສ່ວນສະແດງການເຄື່ອນໄຫວຂອງຕົວລະຄອນ; ພາກສ່ວນມ້ວນທ້າຍເລື່ອງ ແມ່ນການສະຫຼຸບເລື່ອງຊຶ່ງເປັນຈຸດສິ້ນສຸດການເຄື່ອນໄຫວຂອງຕົວລະຄອນ.

## ຂໍ້ສະເໜີແນະ

### ຂໍ້ສະເໜີແນະໃນການນຳຜົນການວິໄຈໄປໃຊ້

- **ການສອນວິເຄາະໂຄງເລື່ອງ:** ຄວນນຳໃຊ້ **ໂຄງສ້າງ 6 ພາກສ່ວນ** (ສ່ວນປະກອບຊື່ເລື່ອງ 3 + ສ່ວນປະກອບເນື້ອເລື່ອງ 3) ທີ່ຄົ້ນພົບໃໝ່ຈາກການວິໄຈນີ້ ເປັນເຄື່ອງມືໃນການສອນວິເຄາະໂຄງເລື່ອງນິທານພື້ນເມືອງລາວ ໃຫ້ແກ່ນັກສຶກສາ. ວິທີນີ້ຈະຊ່ວຍໃຫ້ນັກສຶກສາເຂົ້າໃຈໂຄງສ້າງສະເພາະຂອງນິທານລາວໄດ້ດີກວ່າການນຳໃຊ້ແນວຄິດທິດສະດີຕ່າງປະເທດທົ່ວໄປ.
- **ການປັບປຸງເນື້ອໃນຫຼັກສູດ:** ສະເໜີໃຫ້ພາກວິຊາພາສາ-ວັດທະນະທຳລາວ ພິຈາລະນາເພີ່ມ **ການວິເຄາະສ່ວນປະກອບຊື່ເລື່ອງ** ເຂົ້າໃນຫຼັກສູດການວິເຄາະວັນນະຄະດີ, ເພາະການວິໄຈພົບວ່າມັນເປັນພາກສ່ວນທີ່ສຳຄັນທີ່ສຸດໃນການສື່ສານເນື້ອໃນຂອງນິທານ.

### ຂໍ້ສະເໜີແນະໃນການວິໄຈຄັ້ງຕໍ່ໄປ

- **ຂະຫຍາຍຂອບເຂດນິທານ:** ຄວນມີການສຶກສາໂຄງເລື່ອງນິທານພື້ນເມືອງລາວໃນຈຳນວນທີ່ໃຫຍ່ກວ່າ **34 ເລື່ອງ** ແລະ ກວມເອົານິທານທີ່ຖືກບັນທຶກໄວ້ໃນຮູບແບບ **ຄຳກອນ** ແລະ ມີເນື້ອເລື່ອງຍາວ ເພື່ອເພີ່ມຄວາມຖືກຕ້ອງຂອງໂຄງສ້າງທີ່ຄົ້ນພົບ.
- **ສຶກສາປັດໄຈວັດທະນະທຳ:** ຄວນນຳເອົາແນວຄິດທາງດ້ານ **ສັງຄົມ-ວັດທະນະທຳ** (ເຊັ່ນ: ມູນຄ່າທາງສິນທຳ) ຂອງນິທານລາວ ມາສຶກສາຄຽງຄູ່ກັບໂຄງສ້າງ ເພື່ອໃຫ້ຄຸນຄ່າຂອງນິທານພື້ນເມືອງລາວບໍ່ຖືກຕີລາຄາໃນຂອບເຂດທີ່ແຄບລົງ.

### ຂໍ້ຈຳກັດຂອງການວິໄຈ

- ເນື່ອງຈາກການວິໄຈນີ້ດຳເນີນໃນໄລຍະທີ່ພາກວິຊາຕ້ອງຂຽນ ແລະ ພັດທະນາຕຳລາຮຽນໃໝ່ຫຼາຍຫົວ, ໄລຍະເວລາໃນການວິເຄາະຖານຂໍ້ມູນ (ນິທານ) ຈຶ່ງມີຂີດຈຳກັດ ເຊິ່ງອາດສົ່ງຜົນຕໍ່ຄວາມເລິກເຊິ່ງຂອງການວິເຄາະໂຄງສ້າງບາງເລື່ອງທີ່ເປັນຄຳກອນຍາວ.
- ການຂາດແຄນແນວຄິດທິດສະດີທີ່ສອດຄ່ອງກັບບໍລິບົດໂຄງສ້າງນິທານພື້ນເມືອງລາວໂດຍສະເພາະແມ່ນຂໍ້ຈຳກັດຫຼັກໃນການສ້າງຖານທິດສະດີທີ່ເຂັ້ມແຂງ.

## ໃບກຽດຕິຄຸນ

ບົດຄົ້ນຄວ້າສະບັບນີ້ ສຳເລັດລຸລ່ວງໄປດ້ວຍດີ ກໍຍ້ອນໄດ້ຮັບການຊ່ວຍເຫຼືອ ແລະ ຄວາມເມດຕາກະລຸນາເປັນຈາກຊ່ຽວຊານຄະນະອາຈານປະຈຳສູນຄົ້ນຄວ້າສາລາວ ສຈ.ປອ ບົວລີ ປະພາພັນ ແລະ ຮສ.ປອ ບູນເລີດແສງສຸລິນ ພ້ອມຄະນະໄດ້ໃຫ້ຄຳແນະນຳ ແລະ ກວດແກ້ຂໍ້ຂາດຕົກບົກພ່ອງ ດ້ວຍຄວາມເອົາໃຈໃສ່ເປັນພິເສດ. ຂ້າພະເຈົ້າ ພ້ອມດ້ວຍທີມງານຄົ້ນຄວ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງມາໃນນະໂອກາດນີ້ດ້ວຍ.

ພ້ອມດຽວກັນນັ້ນ ກໍຂໍສະແດງຄວາມຂອບໃຈຢ່າງຍິ່ງຕໍ່ຄະນະກຳມະການໂຄງການຄົ້ນຄວ້າວິະຍາສາດ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ທີ່ໄດ້ໃຫ້ຄວາມກະລຸນາຊ່ວຍເຫຼືອດ້ວຍການອະນຸມັດເງິນສະນັບສະໜູນການຄົ້ນຄວ້າກ່ຽວກັບໂຄງປະກອບສ້າງນິທານິ້ນເມືອງລາວໃຫ້.

ຂໍສະແດງຄວາມຂອບໃຈຕໍ່ຄະນະນຳຄະນະອັກສອນສາດ, ພາກວິຊາພາສາ - ວັດທະນະທຳລາວ ທີ່ໃຫ້ຄວາມຮ່ວມມືອຳນວຍຄວາມສະດວກດ້ານສະຖານ ແລະ ເອກະສານຕ່າງໆ ເຮັດໃຫ້ຂະບວນການຄົ້ນຄວ້າໄດ້ດຳເນີນໄປຕາມແຜນ ແລະ ມີຜົນສຳເລັດດີ.

ຂ້າພະເຈົ້າພ້ອມທີມງານຂໍຖືໂອກາດນີ້ອວຍພອນໃຫ້ແກ່ທ່ານທັງຫຼາຍທັງໄດ້ກ່າວເຖິງ ແລະ ບໍ່ໄດ້ກ່າວເຖິງໃນທີ່ນີ້ ຈົ່ງມີແຕ່ຄວາມສຸກຄວາມຈະເລີນ ມີພະລານາໄມເຂັ້ມແຂງສົມບູນ ແລະ ມີຄວາມສຸກຕະຫຼອດໄປ.

## ເອກະສານອ້າງອີງ

ກຸ່ມນັກວິຊາການລາວ (1993). *ນິທານພື້ນເມືອງ ແລະ ເຜົ່າກະຕູ່.* ກະຊວງວັດທະນະທຳ ແລະຖະແຫຼງຂ່າວ.

ກິແດງ ພອນກະເສີມສຸກ ພ້ອມຄະນະ (1989). *ນິທານພື້ນເມືອງເຫຼັ້ມ 2.* ສະຖາບັນຄົ້ນຄວ້າສິລະປະວັດທະນະທຳແຫ່ງຊາດ.

ກິ່ງແກ້ວ ເພັຊຣະຣາດ. (2000). *ວິເຄາະນິທານລຸ່ມນ້ຳປາດ ແຂວງອຸຕຣາດິດ* (ວິທະຍານິພົນປະລິນຍາມະຫາບັນດິດ). ມະຫາວິທະຍາໄລສິລປາກອນ.

ກຽງແກ້ວ ນວນນະວົງ ແລະ ຄຳຜຸຍ ພົນລືຊາ (2017). *ວັນນະຄະດີພື້ນເມືອງ 1.* ພາກວິຊາ ພາສາ -ວັດທະນະທຳລາວ (ເອກະສານສິດສອນ).

ຄະນະຫໍສະໝຸດແຫ່ງຊາດ (1973). *ທ້າວກຳພ້າຜີນ້ອຍ.* ວຽງຈັນຫໍສະໝຸດແຫ່ງຊາດ.

ຄຳສອນ ທອງມີໄຊ ແລະ ກົງຈັນພະເມືອງ(2020). *ທິດສະດີວັນນະຄະດີ.* ພາກວິຊາ ພາສາລາວ- ວັນນະຄະດີມະຫາວິທະຍາໄລແຫ່ງຊາດ.

ຄຳຜຸຍ ພົນລືຊາ ພ້ອມຄະນະ (2009). *ວິວັດທະນາການວັນນະຄະດີລາວ.* ພາກວິຊາ ພາສາລາວ- ວັນນະຄະດີມະຫາວິທະຍາໄລແຫ່ງຊາດ.

ຄຳຜຸຍ ພົນລືຊາ ພ້ອມຄະນະ (2009). *ນິທານກຳພ້າເຜົ່າລາວ.* ໂຄງການຄົ້ນຄວ້າວິທະຍາສາດ, ຄະນະອັກສອນສາດພາກວິຊາ ພາສາ- ວັດທະນະທຳລາວ.

ຄຳເລືອງ ສຸດາວັນ (2005). *ນິທານພື້ນເມືອງລາວກະຕູ.* ສະຖາບັນ ພ້ອມວັດທະນະທຳກະຊວງຖະແຫຼງຂ່າວ ແລະວັດທະນະທຳ.

ຄຳແພງ ເກດຕະວົງ ພ້ອມຄະນະ (1988). *ສຳມະນາໃບລານທົ່ວປະເທດຄັ້ງທີ 1.* ສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ.

ຄອນສະຫວັນ ຊົງຈະເລີນ ພ້ອມຄະນະ (2004). *ຕົວລະຄອນກຳພ້າໃນວັນນະຄະດີພື້ນເມືອງລາວ.* ບົດຄົ້ນຄວ້າປະລິນຍາຕີ ພາສາລາວ-ວັນນະຄະດີ.

ສະມາຄົມຫໍສະໝຸດແຫ່ງຣາຊະອານາຈັກລາວ (1973). *ທ້າວດາວເຮືອງ.* ຫໍສະໝຸດແຫ່ງຊາດ.

ສິຣາພອນ ນະ ຖະລາງ. (2014). *ໄວຍາກອນ ຂອງນິທານ ການສຶກສານິທານເຊີງໂຄງສ້າງ, ໂຄງການເຜີຍແຜ່ຜົນງານວິຊາການ* ຄະນະອັກສອນສາດ ຈຸລາລົງກອນມະຫາວິທະຍາໄລ.

ສີລາ ວິລະວົງ (1961). *ໜັງສືເທດເລື່ອງເວດສັນດອນຊາດົກ.* ຈັດພິມໂດຍ ໂຄງການພຸດທະສາສະໜາ ເພື່ອການພັດທະນາ.

ສ. ວົງປັດໃຈ ແລະກິໂຍໂກະ ຍາສຸຍ (2000). *ນິທານພື້ນເມືອງເຜົ່າມົ້ງ.* ສະຖາບັນຄົ້ນຄວ້າວັດທະນະທຳກະຊວງຖະແຫຼງຂ່າວ.

ສຸກສະຫວັນ ຈັນທະຈັກ (ພຣະ) ແລະ ບຸນປິຕິ ແອນສີມພູມ (ພຣະ) (2015). *ກຳພ້າກາບລາງ.* ວັດທາດຫຼວງເໜືອ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

ສຸຈິດ ວົງເທດ. (2005). *ຕຳນານພື້ນບ້ານໄທ.* ກຸງເທບມະຫານະຄອນ: ມະຕິຊົນ.

ສຸເນດ ໂພທິສານ ແລະນູນໄຊ ພູມມະຈັນ (2000). *ປະຫວັດສາດລາວ.* ສຳນັກພິມວຽງຈັນ.

ສຽວສະຫວາດ ສິດທິໂສມ (2012-2013). *ຂະໜານຕອບຊັ້ນ ມ.3-ມ.7.* ຄູນິເທດ ແຂວງຫຼວງພະບາງ.

ດວງເດືອນ ບຸນຍາວົງ ພ້ອມຄະນະ ( 2003). *ເລື່ອງ "ທ້າວຮຸ່ງທ້າວເຈືອງ"* ພາກວິຊາ ພາສາລາວ- ວັນນະຄະດີ ມະຫາວິທະຍາໄລແຫ່ງຊາດ.

ທອງຄຳ ອ່ອນມະນີສອນ ແລະ ບົວໄລ ເພັງແສງຄຳ(1995). *ນິທານພື້ນເມືອງລາວ.* ໂຮງພິມພິດສະວົງ ວຽງຈັນ

ທອງເຊີຍ ອຸທຸມພອນ (2011). *ທ້າວ ກຳພ້າກ່ຳກາດຳ.* ພິມທີ່ໂຮງພິມ ດວງມາການພິມ.

ນິພາ ນິດສຸນກິດ. (1981). *ນິທານພື້ນເມືອງຊາວຜູ້ໄທ (ວິທະຍານິພົນ).* ມະຫາວິທະຍາໄລມະຫິດົນ.

ບຸນມີ ເທບສີເມືອງ(2000). *ສີ່ນິທານເດັດ.* ວຽງຈັນໂຮງພິມດາວວິໄລ.

ບຸນມີ ເທບສີເມືອງ(2017). *ປະຫວັດສາດ ວັນນະຄະດີ.* ວຽງຈັນໂຮງພິມດາວວິໄລ.

ບໍ່ແສງຄຳ ວົງດາລາ ພ້ອມຄະນະ (2009). *ວັນນະຄະດີລາວ.* ສຳນັກພິມສຶກສາຫວຽດນາມ.

ບົວຣິນ ວັງຄີຣີ. (2008). ວັນນະກຳພື້ນບ້ານໃນຊຸມຊົນລາວຫຼວງພະບາງກັບບົດບາດການສືບສານຄວາມເປັນລາວຫຼວງພະບາງໃນບໍຣິບົດສັງຄົມໄທ, ວິທະຍານິພົນປະລິນຍາອັກສອນສາດດຸສດີບັນດິດ ສາຂາວິຊາວັນນະຄະດີ ແລະ ວັນນະຄະດີປຽບທຽບ ຄະນະອັກສອນສາດ ຈຸລາລົງກອນມະຫາວິທະຍາໄລ.

ປະຄອງ ນິມມານເໝັນ. (2002). ນິທານພື້ນບ້ານສຶກສາ, ກຸງເທບ ໂຄງການເຜີຍແຜ່ຜົນງານວິຊາການ ຄະນະອັກສອນສາດ ຈຸລາລົງກອນມະຫາວິທະຍາໄລ.

ພິສິດ ກອບບຸນ. (2001). *ໂຄງສ້າງນິທານກຳພ້າຂອງໄທ-ລາວ.* ໃນ *ໄວຍາກອນຂອງນິທານ: ການສຶກສານິທານເຊີງໂຄງສ້າງ.* ສີຣາພອນ ນະ ຖະລາງ, ບັນນາທິການ, ສູນຄະຕິຊົນວິທະຍາ ແລະ ໂຄງການເຜີຍແຜ່ຜົນງານວິຊາການ ຄະນະອັກສອນສາດ ຈຸລາລົງກອນມະຫາວິທະຍາໄລ. ໜ້າ 203-247.

ພິຊຍານີ ເຊີງສີຣີ. (2001). *ໂຄງສ້າງນິທານຈັກໆວົງໆ.* ໃນ *ໄວຍາກອນຂອງນິທານ: ການສຶກສານິທານເຊີງໂຄງສ້າງ,* ສູນຄະຕິຊົນວິທະຍາ ແລະ ໂຄງການເຜີຍແຜ່ຜົນງານວິຊາການ ຄະນະອັກສອນສາດ ຈຸລາລົງກອນມະຫາວິທະຍາໄລ.

ພິຊຍານີ ເຊີງສີຣີ. (1999). *ສຶກສາວັນນະກຳນິທານໄທຕາມທິດສະດີໂຄງສ້າງນິທານຂອງວະລາດິມີຣ໌ ພຣອບພ໌* (ວິທະຍານິພົນອັກສອນສາດມະຫາບັນດິດ ສາຂາວິຊາພາສາໄທ ບັນດິດວິທະຍາໄລ ຈຸລາລົງກອນມະຫາວິທະຍາໄລ).

ພູວົງ ພົມມະສົມ. (2005). *ວັນນະຄະດີລາວ.* ວິທະຍານິພົນປະລິນຍາສິລະປະສາດດຸສດີບັນດິດ ສາຂາວິຊາພາສາໄທ ມະຫາວິທະຍາໄລນະເຣສວນ.

ມະຫາຈູມ ຈັນຕະພິດ (1966). *ກຳພ້າເຕັນດ່ອນ.* ປະທານຄະນະກຳມະການກອງວັນນະຄະດີ.

ລາວວຽງ ອິນທະໜອນ (1995). *ນິທານປາກເປົ່າ ພື້ນເມືອງລາວ.* ມະຫາວິທະຍາໄລ ພາສາ ແລະວັດທະນະທຳພາກຕາເວັນອອກ-ປາຣີສ.

ລາວັນ ສັງຄະພັນທານົນ. (2011). *ບົດບາດໜ້າທີ່ຂອງນິທານພື້ນເມືອງລາວ.* ວິທະຍານິພົນປະລິນຍາສິລະປະສາດດຸສດີບັນດິດ ສາຂາວິຊາພາສາໄທ ມະຫາວິທະຍາໄລນະເຣສວນ.

ອ່ອນຕາ ແກ້ວປັນຍາ (ພຣະ) ແລະ ວັນດີ ວິລະຍາໂພ (ພຣະ) (ບໍ່ໄດ້ບອກປີພິມ). *ຊາຍກຳພ້າແກ່ຫອຍ.* ທານມະເທດສະໜາພຣະສິງແຂວງຫຼວງພະບາງ.

Johnson, Charles (1985). *Myth, legends & Tales from the Hmong of Laos*. Minnesota: Linguistics Department. Macalester colleges.

Lindell, Kistina, Swan, Jan-Ojvind and Damrong Tayanin (1980). *Folk tales from Kammu III: A story-teller's tales*. Lund: Cuzon.

Thompson, S. (1977). *The folktale*. University of California Press.